**ມິຊຊາອາທິດທີ 33 ກຳນົດທຳມະດາ**

**ວັນທີ 14 ພະຈິກ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 13, 24-32**

ພຣະເຢຊູເຈົ້າກ່າວເຖິງການສະເດັດກັບມາໃໝ່ຂອງພຣະອົງໃຫ້ພວກສາວົກຟັງວ່າ: “ໃນເວລານັ້ນ, ເມື່ອຄວາມທຸກເວດທະນາອັນໃຫຍ່ນັ້ນຜ່ານພົ້ນໄປແລ້ວ, ຕາເວັນກໍຈະມືດມົວລົງແລະເດືອນຈະບໍ່ສ່ອງແສງອີກ. ດວງດາວຕ່າງໆຈະຕົກລົງຈາກຟ້າແລະອະນຸພາບໃນທ້ອງຟ້າຈະສັ່ນສະເທືອນ. ເວລານັ້ນຈະເຫັນບຸດມະນຸດສະເດັດກັບມາໃນໝູ່ເມກ ພ້ອມດ້ວຍຣິດທານຸພາບແລະສີມຸງຄຸນອັນຍິ່ງໃຫຍ່. ພຣະອົງຈະໃຊ້ພວກເທວະດາໄປຮຽກໂຮມເອົາພວກເລືອກສັນທັງຫລາຍຈາກສີ່ທິດ, ຕັ້ງແຕ່ສຸດໂລກຈົນເຖິງສຸດຟ້າຂຽວ.

ພວກເຈົ້າຈົ່ງເອົາຄວາມປຽບທຽບເລື່ອງກົກໝາກເດື່ອມາເປັນບົດຮຽນຄື: ເມື່ອເຫັນກິ່ງກ້ານມັນອ່ອນແລະປົ່ງໃບ, ພວກເຈົ້າກໍຮູ້ວ່າລະດູຮ້ອນໃກ້ເຂົ້າມາແລ້ວ. ກໍດັ່ງດຽວກັນ, ເມື່ອພວກເຈົ້າເຫັນສິ່ງເຫລົ່ານີ້ເກີດຂຶ້ນມາ, ກໍຈົ່ງຮູ້ໄວ້ເຖີດວ່າບຸດມະນຸດສະເດັດມາໃກ້ຈະເຖິງປະຕູແລ້ວ.

ເຮົາບອກພວກເຈົ້າເປັນຄວາມຈິງວ່າ: “ຄົນເຊັ່ນນີ້ຈະບໍ່ຜ່ານພົ້ນໄປກ່ອນເຫດການເຫລົ່ານີ້ຈະອຸບັດຂຶ້ນ, ຟ້າດິນຈະຜ່ານພົ້ນໄປແຕ່ວາຈາຂອງເຮົາຈະບໍ່ຜ່ານພົ້ນໄປໄດ້ເລີຍ. ສ່ວນເລື້ອງວັນໃດແລະເວລາໃດນັ້ນບໍ່ມີໃຜຮູ້ໄດ້, ແມ່ນພວກເທວະດາໃນສະຫວັນ, ແມ່ນພຣະບຸດເອງກໍບໍ່ຮູ້, ມີແຕ່ພຣະບິດາເຈົ້າຜູ້ດຽວເທົ່ານັ້ນຮູ້ຈັກ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຍັງພຽງແຕ່ອາທິດນີ້ແລະອາທິດໜ້າເທົ່ານັ້ນ, ພວກເຮົາກໍຈະສະລຸບປີພິທີກໍາທາງສາດສະໜາແລະກ້າວເຂົ້າສູ່ປີພິທີກໍາໃໝ່. ດ້ວຍເຫດນີ້, ພຣະກຣິສຕະຈັກຈຶ່ງເຊື້ອເຊີນພວກເຮົາໃຫ້ເບິ່ງຄືນຊີວິດປີໜຶ່ງທີ່ຜ່ານມາເພື່ອຂອບພຣະຄຸນພຣະເຈົ້າສໍາລັບການຮ່ວມເດີນທາງຂອງພຣະອົງກັບພວກເຮົາໃນແຕ່ລະບາດກ້າວຂອງຊີວິດ. ບໍ່ວ່າຈະເປັນຍາມສຸກສະບາຍກໍຄືຍາມທຸກຍາກ. ບໍ່ວ່າຈະເປັນຍາມມ່ວນຊື່ນກໍຄືຍາມໂສກເສົ້າ. ພຣະອົງລ້ວນແຕ່ຢູ່ຄຽງຂ້າງພວກເຮົາສະເໝີ. ແລະໃນເວລາດຽວກັນກໍເປັນໂອກາດໃຫ້ພວກເຮົາໄດ້ເບິ່ງຄືນສິ່ງທີ່ຂາດຕົກບົກຜ່ອງໃນຊີວິດຂອງພວກເຮົາເພື່ອຈະໄດ້ດັດແປງແກ້ໄຂແລະຂໍໂທດນໍາພຣະເຈົ້າສໍາລັບສິ່ງທີ່ຍັງບໍ່ສອດຄ່ອງກັບນໍ້າພຣະໄທຂອງພຣະອົງ. ຈາກນັ້ນ, ໃຫ້ພວກເຮົາພະຍາຍາມຜັນປ່ຽນຊີວິດໃຫ້ດີຂຶ້ນແຕ່ລະມື້ແຕ່ລະວັນ. ການທີ່ພວກເຮົາເບິ່ງຄືນຊີວິດໃນປີໜຶ່ງທີ່ຜ່ານມານີ້ປຽບເໝືອນການທີ່ພວກເຮົາຕື່ນເຝົ້າກະກຽມວັນທີ່ພຣະເຈົ້າຈະກັບມາອີກຄັ້ງ ອັນແມ່ນວາລະສຸດທ້າຍແຫ່ງຊີວິດຂອງພວກເຮົານັ້ນເອງ. ເພາະການຕື່ນເຝົ້າບໍ່ໝາຍຄວາມວ່າພວກເຮົາບໍ່ຫລັບບໍ່ນອນເພື່ອນັ່ງລໍຖ້າວັນທີ່ພຣະເຢຊູເຈົ້າຈະກັບມາ. ແຕ່ການຕື່ນເຝົ້າແມ່ນການຮູ້ຈັກສັງເກດ. ສັງເກດເບິ່ງຊີວິດການກະທໍາຂອງພວກເຮົາ. ສັງເກດເບິ່ງເຫດການທີ່ເກີດຂຶ້ນຢູ່ອ້ອມຂ້າງພວກເຮົາ. ແລະສິ່ງທີ່ສໍາຄັນທີ່ສຸດທີ່ພວກເຮົາຕ້ອງເບິ່ງແລະຄິດພິດຈາລະນາກໍຄື: ວາຈາພຣະເຈົ້ານັ້ນເອງ. ເພາະວາຈາພຣະເຈົ້າເປັນແສງສະວ່າງແລະຫົນທາງທີ່ນໍາພວກເຮົາໄປສູ່ຄວາມຈິງແລະຊີວິດ. ຖ້າພວກເຮົາເດີນຕາມແສງສະວ່າງແລະຫົນທາງນີ້ພວກເຮົາກໍຈະໄປສູ່ອານາຈັກຂອງພຣະອົງນັ້ນເອງ.

**ພາວະນາ**

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍປຸກລຸກຈິດໃຈພວກເຮົາໃຫ້ຕື່ນຂຶ້ນຈາກການຫລັບນອນ,ມົວເມົານໍາວັດຖຸເງິນຄໍາຢູ່ໃນໂລກນີ້ ເພື່ອພວກເຮົາຈະໄດ້ຄິດຫາສິ່ງທີ່ຖາວອນໝັ້ນຄົງຄືການໄດ້ຢູ່ກັບພຣະເຈົ້າເມື່ອເວລາພຣະອົງຈະສະເດັດກັບມາອີກຄັ້ງ ໃນສີມຸງຄຸນຂອງພຣະອົງນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ